ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອຸດົມໄຊ

ເຈົ້າແຂວງ

ເລກທີ 760/ຈຂ.ອຊ.

ອຸດົມໄຊ, ວັນທີ 21 ສິງຫາ 2019.

# ຂໍ້ຕົກລົງ

## ຂອງເຈົ້າແຂວງ ວ່າດ້ວຍ ການຄຸ້ມຄອງ, ບູລະນະ, ນຳໃຊ້ປ່າຊາ ແລະ ທີ່ດິນປ່າຊາທຳມະຊາດຢູ່ ແຂວງອຸດົມໄຊ

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007.
- ອີງຕາມ ກົດໝາຍ ວ່າດ້ວຍ ການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015.
- ອີງຕາມ ກົດໝາຍ ວ່າດ້ວຍ ການສ້າງນິຕິກຳ ສະບັບເລກທີ່ 19/ສພຊ, ລົງວັນທີ 12 ກໍລະກົດ 2012.
- ອີງຕາມ ມະຕິ ຂອງກອງປະຊຸມສະພາປະຊາຊົນ ຂັ້ນແຂວງ ກ່ຽວກັບ ການຮັບຮອງເອົາ ຂໍ້ຕົກລົງ ຂອງທ່ານ ເຈົ້າແຂວງ ວ່າດ້ວຍ ການຄຸ້ມຄອງ, ບູລະນະ, ການນຳໃຊ້ປ່າຊາ ແລະ ທີ່ດິນປ່າຊາທຳມະຊາດ ຢູ່ ແຂວງອຸດົມໄຊ ສະບັບເລກທີ 650/ຈຂ.ອຊ, ລົງວັນທີ 6 ສິງຫາ 2019.

## ເຈົ້າແຂວງ-ແຂວງ ອຸດົມໄຊ ຕົກລົງ:

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຕິດຕາມ, ກວດກາ, ການຄຸ້ມຄອງ, ບູລະນະ, ນຳໃຊ້ປ່າຊາ ແລະ ທີ່ດິນປ່າຊາທຳມະຊາດ ຢູ່ພາຍໃນ ແຂວງອຸດົມໄຊ ໃຫ້ເປັນເສດຖະກິດແບບຍືນຍົງ ຕິດພັນກັບການຟື້ນຟູ ແລະ ເສີມຂະຫຍາຍ ປ່າຊາທຳມະຊາດ ໃຫ້ມີຄວາມອຸດົມສົມບູນ ແລະ ປະກອບສ່ວນເຂົ້າໃນການພັດທະນາ ເສດຖະກິດ-ສັງຄົມ ຢູ່ພາຍໃນ ແຂວງອຸດົມໄຊ.

**ມາດຕາ 2 ການຄຸ້ມຄອງ, ບູລະນະ, ນຳໃຊ້ປ່າຊາ ແລະ ທີ່ດິນປ່າຊາທຳມະຊາດ**

ການຄຸ້ມຄອງ, ບູລະນະ, ນຳໃຊ້ປ່າຊາ ແລະ ທີ່ດິນປ່າຊາທຳມະຊາດ ແມ່ນການເຮັດໃຫ້ປ່າຊາ ແລະ ທີ່ດິນປ່າຊາທຳມະຊາດ ໄດ້ຮັບການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ຢ່າງມີແບບແຜນ, ເປັນລະບົບ ແລະ ຍືນຍົງ, ຮັບປະກັນບໍ່ໃຫ້ປ່າຊາທຳມະຊາດ ຖືກບຸກລຸກທຳລາຍ, ຊຸດໂຊມ ຫຼື ສູນພັນ.

**ມາດຕາ 3 ອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ປ່າຊາທຳມະຊາດ ໝາຍເຖິງ** ພື້ນທີ່ປ່າໄມ້ ທີ່ມີຕົ້ນຊາທຳມະຊາດເກີດຂຶ້ນ ແລະ ຂະຫຍາຍພັນດ້ວຍຕົວມັນເອງຕາມທຳມະຊາດ ເປັນຕົ້ນຕໍ;
2. **ທີ່ດິນປ່າຊາທຳມະຊາດ ໝາຍເຖິງ** ເນື້ອທີ່ດິນທຸກຕອນ ທີ່ມີຕົ້ນຊາທຳມະຊາດເກີດຂຶ້ນ ກະຈາຍຢູ່ໃນພື້ນທີ່ດັ່ງກ່າວ ເຊິ່ງລັດໄດ້ກຳນົດໃຫ້ເປັນທີ່ດິນປ່າຊາທຳມະຊາດ;

3. **ການຄຸ້ມຄອງປ່າຊາ ແລະ ທີ່ດິນປ່າຊາທຳມະຊາດ ໝາຍເຖິງ** ການເບິ່ງແຍງ, ດູແລ, ປົກປັກຮັກສາ ແລະ ພັດທະນາປ່າຊາ ແລະ ທີ່ດິນທຳມະຊາດ ໃຫ້ມີຄວາມຍືນຍົງຄົງຕົວ ແລະ ຂະຫຍາຍຕົວ, ປາສະຈາກການຖືກບຸກລຸກທຳລາຍດ້ວຍຮູບການຕ່າງໆ;

4. **ການບູລະນະປ່າຊາ ແລະ ທີ່ດິນປ່າຊາທຳມະຊາດ ໝາຍເຖິງ** ການປັບປຸງ, ປົວແປງ, ຟື້ນຟູປ່າຊາ ແລະ ທີ່ດິນປ່າຊາທຳມະຊາດ ໃຫ້ກັບຄືນສູ່ສະພາບເດີມ.

5. **ການນຳໃຊ້ປ່າຊາ ແລະ ທີ່ດິນປ່າຊາທຳມະຊາດ ໝາຍເຖິງ** ການນຳໃຊ້ໃບຊາຕາມປະເພນີ, ການນຳໃຊ້ປ່າຊາ ແລະ ທີ່ດິນປ່າຊາເພື່ອທຸລະກິດ ເຊັ່ນ: ການເກັບໃບຊາເພື່ອຂາຍເປັນສິນຄ້າ, ການອະນຸລັກຮັກສາຕົ້ນຊາເພື່ອການທ່ອງທ່ຽວ, ສະຖານທີ່ພັກຜ່ອນ, ການສຶກສາຄົ້ນຄ້ວາ ແລະ ອື່ນໆ.

**ມາດຕາ 4 ນະໂຍບາຍຂອງແຂວງ**

ແຂວງ ຊຸກຍູ້, ສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເຂົ້າຮ່ວມໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ບູລະນະ, ນຳໃຊ້ປ່າຊາ ແລະ ທີ່ດິນປ່າຊາທຳມະຊາດ ໂດຍຕິດພັນກັບການພັດທະນາເສດຖະກິດ-ສັງຄົມ ຂອງແຂວງ ໃນແຕ່ລະໄລຍະ ພ້ອມທັງປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ໃນການຄຸ້ມຄອງ, ບູລະນະ, ນຳໃຊ້ປ່າຊາ ແລະ ທີ່ດິນປ່າຊາທຳມະຊາດ ໃຫ້ມີຄວາມຍືນຍົງ ແລະ ສອດຄ່ອງຕາມລະບຽບກົດໝາຍ ເພື່ອສ້າງລາຍຮັບໃຫ້ແກ່ປະຊາຊົນບັນດາເຜົ່າດີຂຶ້ນເທື່ອລະກ້າວ.

**ມາດຕາ 5 ຫຼັກການ ໃນການຄຸ້ມຄອງ, ບູລະນະ, ນຳໃຊ້ປ່າຊາ ແລະ ທີ່ດິນປ່າຊາທຳມະຊາດ**

ຫຼັກການ ໃນການຄຸ້ມຄອງ, ບູລະນະ, ນຳໃຊ້ປ່າຊາ ແລະ ທີ່ດິນທຳມະຊາດ ມີດັ່ງນີ້:

1. ຮັບປະກັນຄວາມຖືກຕ້ອງ ແລະ ສອດຄ່ອງ ກັບ ແຜນພັດທະນາເສດຖະກິດ-ສັງຄົມ, ວຽກງານປ້ອງກັນຊາດ- ປ້ອງກັນຄວາມສະຫງົບ, ແຜນການນຳໃຊ້ປ່າໄມ້ ແລະ ທີ່ດິນປ່າໄມ້ຂອງແຂວງ;

2. ຮັບປະກັນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາປ່າຊາທຳມະຊາດໃຫ້ອຸດົມສົມບູນ ໂດຍການມີສ່ວນຮ່ວມຂອງປະຊາຊົນ;

3. ຮັບປະກັນຜົນປະໂຫຍດຂອງລັດ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າຊາທຳມະຊາດ ຕາມກົດໝາຍ ແລະ ລະບຽບການ;

4. ຮັບປະກັນການນຳໃຊ້ປ່າຊາທຳມະຊາດ ໃຫ້ມີປະສິດທິຜົນ, ມີຄວາມຍືນຍົງ, ບໍ່ກະທົບຕໍ່ກັບຊັບພະຍາກອນປ່າໄມ້ ແລະ ສິ່ງແວດລ້ອມ.

**ມາດຕາ 6 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ເຂົ້າໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ນຳໃຊ້ປ່າຊາ ແລະ ທີ່ດິນປ່າຊາທຳມະຊາດຢູ່ ແຂວງອຸດົມໄຊ.

## ໝວດທີ II

## ການຄຸ້ມຄອງ, ບູລະນະ, ນຳໃຊ້ປ່າຊາ ແລະ ທີ່ດິນປ່າຊາທຳມະຊາດ

**ມາດຕາ 7 ການຄຸ້ມຄອງປ່າຊາ ແລະ ທີ່ດິນປ່າຊາທຳມະຊາດ**

ການຄຸ້ມຄອງປ່າຊາ ແລະ ທີ່ດິນປ່າຊາທຳມະຊາດ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ດຳເນີນການສຳຫຼວດຈັດສັນ, ກຳນົດຂອບເຂດພື້ນທີ່ປ່າຊາທຳມະຊາດ, ຕີລາຄາສະພາບອັດຕາ ການປົກຫຸ້ມ, ເກັບກຳຂໍ້ມູນທາງດ້ານຈຳນວນ, ຂະໜາດວັດຮອບ ແລະ ລວງສູງຂອງຕົ້ນຊາ ລວມທັງຕົ້ນຊານ້ອຍລືບພັນ;

2. ຂຶ້ນທະບຽນທີ່ດິນປ່າຊາ ແລະ ຕົ້ນຊາທຳມະຊາດ ລວມທັງ ຕົ້ນຊາ ຫຼື ປ່າຊາ ທີ່ຈະຮັກສາໄວ້ເປັນແຫຼ່ງແກ່ນພັນຢູ່ແຕ່ລະເຂດຂອງບັນດາເມືອງ ໃຫ້ລະອຽດ ແລະ ເປັນລະບົບ;

3. ຕິດປ້າຍ, ປັກຫຼັກໝາຍຂອບເຂດຄຸ້ມຄອງປ່າຊາທຳມະຊາດ ຢູ່ແຕ່ລະເຂດຂອງບັນດາເມືອງໃຫ້ຈະແຈ້ງ;

4. ແຕ່ງຕັ້ງຄະນະຮັບຜິດຊອບ ຄຸ້ມຄອງການນຳໃຊ້ປ່າຊາທຳມະຊາດ ຢູ່ຂັ້ນເມືອງ, ກຸ່ມບ້ານ ແລະ ບ້ານ ເພື່ອເປັນຕົວແທນໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະນຳໃຊ້ປ່າຊາທຳມະຊາດ ໃຫ້ມີຄວາມຍືນຍົງ;

5. ຈັດຕັ້ງກຸ່ມ ຫຼື ສະມາຄົມ ຄຸ້ມຄອງການເກັບກູ້ໃບຊາທຳມະຊາດ ຢູ່ຂັ້ນບ້ານ ຫຼື ກຸ່ມບ້ານ ເພື່ອໃຫ້ເປັນເຈົ້າການຄຸ້ມຄອງ, ນຳໃຊ້ປ່າຊາ ແລະ ທີ່ດິນປ່າຊາທຳມະຊາດ ຢູ່ແຕ່ລະເຂດຂອງບັນດາເມືອງ ໃຫ້ເປັນລະບົບ;

6. ສ້າງລະບຽບໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ນຳໃຊ້ປ່າຊາ ແລະ ທີ່ດິນປ່າຊາທຳມະຊາດຢູ່ຂັ້ນບ້ານ ຫຼື ກຸ່ມຜູ້ນຳໃຊ້ປ່າຊາທຳມະຊາດ ຢູ່ພາຍໃນບ້ານ;

7. ມອບຄວາມຮັບຜິດຊອບໃຫ້ບ້ານ ແລະ ກຸ່ມຄົນ ເປັນເຈົ້າການຄຸ້ມຄອງ, ນຳໃຊ້ປ່າຊາ ແລະ ທີ່ດິນປ່າຊາທຳມະຊາດ ຢູ່ແຕ່ລະເຂດຂອງບັນດາເມືອງໃຫ້ມີປະສິດທິຜົນສູງ;

8. ຄຸ້ມຄອງ, ຕິດຕາມ, ກວດກາ ການເກັບກູ້, ຊື້-ຂາຍ, ເຄື່ອນຍ້າຍເບ້ຍຊາ, ຕົ້ນຊາ, ໃບຊາ ແລະ ຜະລິດຕະພັນໃບຊາ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 8 ການບູລະນະ, ນຳໃຊ້ປ່າຊາ ແລະ ທີ່ດິນປ່າຊາທຳມະຊາດ**

ການບູລະນະ, ນຳໃຊ້ປ່າຊາ ແລະ ທີ່ດິນປ່າຊາທຳມະຊາດ ມີດັ່ງນີ້:

1. ອະນຸຍາດໃຫ້ບຸກຄົນເກັບກູ້ໃບຊາທຳມະຊາດເພື່ອຊົມໃຊ້ໃນຄອບຄົວຕາມປະເພນີທີ່ເຄີຍປະຕິບັດກັນຜ່ານມາ ໂດຍສອດຄ່ອງຕາມກົດໝາຍ ແລະ ລະບຽບການ ແຕ່ບໍ່ໃຫ້ມີຜົນກະທົບອັນບໍ່ດີຕໍ່ກັບປ່າຊາ, ຕົ້ນຊາທຳມະຊາດ ແລະ ສິ່ງແວດລ້ອມ;

2. ອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ນຳໃຊ້ປ່າຊາ ແລະ ທີ່ດິນປ່າຊາທຳມະຊາດ ເຊັ່ນ: ການນຳໃຊ້ໃບຊາຕາມປະເພນີ ແລະ ການເກັບໃບຊາເພື່ອຂາຍເປັນສິນຄ້າ, ເພື່ອການທ່ອງທ່ຽວ, ສະຖານທີ່ພັກຜ່ອນ, ການສຶກສາຄົ້ນຄ້ວາ ແລະ ອື່ນໆ ແຕ່ຕ້ອງໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ ຕາມກົດໝາຍ ແລະ ລະບຽບການ;

3. ການເກັບກູ້ໃບຊາທຳມະຊາດ ຕ້ອງໃຫ້ຖືກຕາມຂອບເຂດ ຫຼື ຕາມແຜນການທີ່ລັດອະນຸຍາດ ແລະ ເກັບກູ້ໃຫ້ຖືກຕ້ອງຕາມເຕັກນິກວິຊາການ;

4. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເກັບກູ້ໃບຊາທຳມະຊາດ ຕ້ອງຕິດພັນກັບການບູລະນະຟື້ນຟູປ່າຊາ ຫຼື ປູກເສີມຕົ້ນຊາທຳມະຊາດໃຫ້ຫຼາຍຂຶ້ນ. ສຳລັບຕົ້ນຊາທີ່ນຳມາປູກ ຕ້ອງແມ່ນຕົ້ນຊາຊະນິດພັນດຽວກັນກັບຕົ້ນຊາທຳມະຊາດ ທີ່ເກີດຂຶ້ນຢູ່ໃນພື້ນທີ່ດັ່ງກ່າວ.

## ໝວດທີ III

## ສິດ ແລະ ພັນທະ ຂອງຜູ້ນຳໃຊ້ປ່າຊາ ແລະ ທີ່ດິນປ່າຊາທຳມະຊາດ

**ມາດຕາ 9 ສິດນຳໃຊ້ປ່າຊາ ແລະ ທີ່ດິນປ່າຊາທຳມະຊາດ**

ສິດນຳໃຊ້ປ່າຊາ ແລະ ທີ່ດິນປ່າຊາທຳມະຊາດ ແມ່ນການຕົກລົງຂອງອົງການທີ່ມີສິດໜ້າທີ່ກ່ຽວຂ້ອງເປັນຜູ້ມອບສິດໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ນຳໃຊ້ຕາມແຜນຈັດສັນໃຫ້ສອດຄ່ອງຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 10 ພັນທະຂອງຜູ້ນຳໃຊ້ປ່າຊາ ແລະ ທີ່ດິນປ່າຊາທຳມະຊາດ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ນຳໃຊ້ປ່າຊາ ແລະ ທີ່ດິນປ່າຊາທຳມະຊາດຕ້ອງມີພັນທະ ດັ່ງນີ້:

1. ປົກປັກຮັກສາປ່າຊາ ແລະ ທີ່ດິນປ່າຊາ, ປູກ ຫຼື ຟື້ນຟູແບບທຳມະຊາດ ເພື່ອໃຫ້ມີຄວາມຍືນຍົງ;

2. ປະກອບສ່ວນຂົນຂວາຍທຶນຮອນພາຍໃນ ແລະ ຕ່າງປະເທດ ເຂົ້າໃນການພັດທະນາປ່າຊາ ແລະ ທີ່ດິນປ່າຊາທຳມະຊາດ;

3. ໃຫ້ການຮ່ວມມືກັບອົງການທີ່ກ່ຽວຂ້ອງ ໃນການນຳໃຊ້ປ່າຊາ ແລະ ທີ່ດິນປ່າຊາທຳມະຊາດ;

4. ສະກັດກັ້ນ ການທຳລາຍປ່າຊາທຳມະຊາດ ເຊັ່ນ: ໄຟໄໝ້ລາມປ່າຊາ, ຕັດຕົ້ນຊາ, ຂຸດເອົາຕົ້ນຊາ ແລະ ອື່ນໆ;

5. ປະຕິບັດພັນທະອື່ນໆ ຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍ ແລະ ລະບຽບການ.

## ໝວດທີ IV

## ອົງການຄຸ້ມຄອງປ່າຊາ ແລະ ທີ່ດິນປ່າຊາທຳມະຊາດ

**ມາດຕາ 11 ອົງການຄຸ້ມຄອງປ່າຊາ ແລະ ທີ່ດິນປ່າຊາທຳມະຊາດ**

ອົງການຄຸ້ມຄອງປ່າຊາ ແລະ ທີ່ດິນປ່າຊາທຳມະຊາດຢູ່ ແຂວງຊຸດົມໄຊ ແມ່ນອົງການດຽວກັນ ກັບ ອົງການຄຸ້ມຄອງປ່າໄມ້ ທີ່ໄດ້ກຳນົດຢູ່ໃນມາດຕາ 104 ຂອງກົດໝາຍປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007 ເຊິ່ງປະກອບດ້ວຍ.

1. ຂັ້ນແຂວງ ແມ່ນພະແນກກະສິກຳ ແລະ ປ່າໄມ້ແຂວງ;
2. ຂັ້ນເມືອງ ແມ່ນຫ້ອງການກະສິກຳ ແລະ ປ່າໄມ້ເມືອງ;
3. ຂັ້ນບ້ານ ແມ່ນຄະນະ ກຳມະການ ຄຸ້ມຄອງປ່າໄມ້ບ້ານ.

**ມາດຕາ 12 ສິດ ແລະ ໜ້າທີ່ ຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ**

ພະແນກກະສິກຳ ແລະ ປ່າໄມ້ແຂວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍແນວທາງນະໂຍບາຍ, ແຜນຍຸດທະສາດ, ມະຕິ, ຄຳສັ່ງ, ກົດໝາຍ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງ, ບູລະນະ, ນຳໃຊ້ປ່າຊາ ແລະ ທີ່ດິນປ່າຊາທຳມະຊາດ ຢູ່ໃນເຂດຄວາມຮັບຜິດຊອບຂອງຕົນ;

2. ຊີ້ນຳ, ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານ ການຄຸ້ມຄອງ ແລະ ນຳໃຊ້ປ່າຊາທຳມະຊາດ ຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ;

3. ຄົ້ນຄ້ວາ ແລະ ມີຄຳເຫັນ ກ່ຽວກັບການລົງທຶນ ດ້ານທຸລະກິດກ່ຽວກັບຊາ ເພື່ອສະເໜີຕໍ່ຂັ້ນເທິງພິຈາລະນາ;

4. ອອກໃບອະນຸຍາດເກັບກູ້ໃບຊາ ຕາມກົດໝາຍ ແລະ ລະບຽບການ;

5. ປະສານສົມທົບ ກັບອົງການທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດວຽກງານຄຸ້ມຄອງ, ບູລະນະ, ນຳໃຊ້ປ່າຊາ ແລະ ທີ່ດິນປ່າຊາທຳມະຊາດ;

6. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ແລະ ນຳໃຊ້ປ່າຊາທຳມະຊາດ ໃຫ້ຂັ້ນເທິງຊາບໃນແຕ່ລະໄລຍະ;

7. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 13 ສິດ ແລະ ໜ້າທີ່ ຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ**

ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍແນວທາງນະໂຍບາຍ, ແຜນຍຸດທະສາດ, ແຜນການ, ແຜນງານ, ໂຄງການ, ກົດໝາຍ, ມະຕິ, ຄຳສັ່ງ, ຄຳແນະນຳ, ຂໍ້ຕົກລົງ, ແຈ້ງການ ແລະ ລະບຽບການ ກ່ຽວກັບ ວຽກງານຄຸ້ມຄອງ, ບູລະນະ, ນຳໃຊ້ປ່າຊາ ແລະ ທີ່ດິນທຳມະຊາດ ຢູ່ພາຍໃນເມືອງຂອງຕົນ;

2. ຊີ້ນຳ, ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານ ຂອງຄະນະກຳມະການປ່າໄມ້ບ້ານ ເປັນຕົ້ນແມ່ນ ການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ນຳໃຊ້ປ່າຊາ ແລະ ທີ່ດິນປ່າຊາທຳມະຊາດ ຢູ່ຂັ້ນບ້ານ ໃຫ້ສອດຄ່ອງຕາມກົດໝາຍ ແລະ ລະບຽບການ;

3. ສະຫຼຸບ ແລະ ລາຍງານ ຜົນການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງ, ບູລະນະ, ນຳໃຊ້ປ່າຊາ ແລະ ທີ່ດິນ

ປ່າຊາທຳມະຊາດ ໃຫ້ການນຳເມືອງ, ພະແນກກະສິກຳ ແລະ ປ່າໄມ້ ຢ່າງເປັນປົກກະຕິ;

4. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 14 ສິດ ແລະ ໜ້າທີ່ ຂອງຄະນະກຳມະການປ່າໄມ້ບ້ານ**

ຄະນະກຳມະການປ່າໄມ້ບ້ານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄ້ວາ ແລະ ສະເໜີ ໃຫ້ອົງການປົກຄອງບ້ານ ອອກລະບຽບການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ, ນຳໃຊ້ປ່າຊາ ແລະ ທີ່ດິນປ່າຊາທຳມະຊາດຢູ່ຂັ້ນບ້ານ ໂດຍສອດຄ່ອງຕາມກົດໝາຍ ແລະ ລະບຽບການ;

2. ເຜີຍແຜ່ລະບຽບການຄຸ້ມຄອງ, ບູລະນະ, ນຳໃຊ້ປ່າຊາ ແລະ ທີ່ດິນປ່າຊາທຳມະຊາດ ໃຫ້ປະຊາຊົນພາຍໃນບ້ານຮັບຮູ້ ແລະ ເຂົ້າໃຈ;

3. ຈັດຕັ້ງປະຕິບັດກົດໝາຍ, ມະຕິ, ຄຳສັ່ງ, ຄຳແນະນຳ, ຂໍ້ຕົກລົງ, ແຈ້ງການ ແລະ ລະບຽບການຄຸ້ມຄອງ, ບູລະນະ, ນຳໃຊ້ປ່າຊາ ແລະ ທີ່ດິນປ່າຊາທຳມະຊາດ ໃຫ້ມີຄວາມຍືນຍົງ;

4. ຕິດຕາມ ສະພາບການຄຸ້ມຄອງ, ບູລະນະ, ນຳໃຊ້ປ່າຊາ ແລະ ທີ່ດິນປ່າທຳມະຊາດ ຢູ່ໃນຂອບເຂດບ້ານຂອງຕົນແລ້ວລາຍງານ ໃຫ້ອົງການປົກຄອງບ້ານ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ;

5. ສະກັດກັ້ນ ແລະ ຕ້ານທຸກການກະທຳ ເຊັ່ນ: ການລັກລອບຕັດ, ຈູດ, ຂຸດເອົາຕົ້ນຊາ, ເບ້ຍຊານ້ອຍ ແລະ ເກັບໃບຊາ ທີ່ບໍ່ໄດ້ຮັບອະນຸຍາດ;

6. ສະຫຼຸບ ແລະ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ, ບູລະນະ, ນຳໃຊ້ປ່າຊາ ແລະ ທີ່ດິນປ່າຊາທຳມະຊາດຢູ່ພາຍໃນບ້ານ ໃຫ້ອົງການປົກຄອງບ້ານ, ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ຢ່າງເປັນປົກກະຕິ;

7. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ V
## ອົງການກວດກາ ການຄຸ້ມຄອງ, ບູລະນະ, ນຳໃຊ້ປ່າຊາ ແລະ ທີ່ດິນປ່າຊາທຳມະຊາດ

**ມາດຕາ 15 ອົງການກວດກາ ການຄຸ້ມຄອງ, ບູລະນະ, ນຳໃຊ້ປ່າຊາ ແລະ ທີ່ດິນປ່າຊາທຳມະຊາດ**

ອົງການກວດກາ ການຄຸ້ມຄອງ, ບູລະນະ, ນຳໃຊ້ປ່າຊາ ແລະ ທີ່ດິນປ່າຊາທຳມະຊາດ ປະກອບມີຄື: ອົງການກວດກາພາຍໃນ ແລະ ອົງການກວດກາພາຍນອກ.

1. ອົງການກວດກາພາຍໃນ ມີຄື:
   - ຂັ້ນແຂວງ ແມ່ນກອງກວດກາປ່າໄມ້ແຂວງ ເປັນເສນາທິການ ໃຫ້ພະແນກກະສິກຳ ແລະປ່າໄມ້;
   - ຂັ້ນເມືອງ ແມ່ນໜ່ວຍງານກວດກາປ່າໄມ້ເມືອງ ເປັນເສນາທິການ ໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.
2. ອົງການກວດກາພາຍນອກ ມີຄື:
   - ສະພາປະຊາຊົນ ຂັ້ນແຂວງ;
   - ຄະນະກວດກາພັກ - ລັດແຂວງ ແລະ ເມືອງ;
   - ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນແຕ່ລະຂັ້ນ, ສື່ມວນຊົນ ແລະ ປະຊາຊົນ.

**ມາດຕາ 16 ສິດ ແລະ ໜ້າທີ່ ຂອງອົງການກວດກາພາຍໃນ**

ອົງການກວດກາພາຍໃນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງ, ບູລະນະ, ນຳໃຊ້ປ່າຊາ ແລະ

ທີ່ດິນປ່າຊາທຳມະຊາດ;

2. ລາດຕະເວນ ແລະ ກວດກາກິດຈະການດຳເນີນທຸລະກິດຂອງຜູ້ປະກອບການ ກ່ຽວກັບການເກັບກູ້, ຊື້-ຂາຍໃບຊາ, ການນຳໃຊ້ປ່າຊາ ແລະ ທີ່ດິນປ່າຊາທຳມະຊາດ ໃນເຂດຄວາມຮັບຜິດຊອບຂອງຕົນ;

3. ຮັບ, ບັນທຶກການແຈ້ງຄວາມ, ທວງເອົາ ແລະ ກວດກາເອກະສານ ທີ່ເຫັນວ່າມີການລະເມີດກົດໝາຍ ແລະ ລະບຽບການ;

4. ດຳເນີນຄະດີຕໍ່ຜູ້ກະທຳຜິດ ກ່ຽວກັບການຄຸ້ມຄອງ, ບູລະນະ, ນຳໃຊ້ປ່າຊາ ແລະ ທີ່ດິນປ່າຊາທຳມະຊາດ ຕາມມາດຕາ 23 ຂອງຂໍ້ຕົກລົງສະບັບນີ້;

5. ສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງ ອອກຄຳສັ່ງຢຸດເຊົາການເຄື່ອນໄຫວກິດຈະການ ກ່ຽວກັບ ການເກັບກູ້, ຊື້-ຂາຍໃບຊາ, ການນຳໃຊ້ປ່າຊາ ແລະ ທີ່ດິນປ່າຊາທຳມະຊາດ ຫຼື ໂຈະໜ້າທີ່ຕຳແໜ່ງຂອງພະນັກງານ, ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ຖ້າເຫັນວ່າມີການກະທຳບໍ່ຖືກຕາມກົດໝາຍ ແລະ ລະບຽບການ;

6. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 17 ສິດ ແລະ ໜ້າທີ່ ຂອງອົງການກວດກາພາຍນອກ**

ອົງການກວດກາພາຍນອກ ມີສິດ ແລະ ໜ້າທີ່ ກວດກາການຈັດຕັ້ງປະຕິບັດໜ້າທີ່ ຂອງອົງການທີ່ກ່ຽວຂ້ອງ ໃນການຄຸ້ມຄອງ, ບູລະນະ, ນຳໃຊ້ປ່າຊາ ແລະ ທີ່ດິນປ່າຊາທຳມະຊາດ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ, ມີຄວາມໂປ່ງໃສ ແລະ ຍຸຕິທຳ.

## ໝວດທີ VI
## ຂໍ້ຫ້າມ

**ມາດຕາ 18 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງປະຕິບັດ ດັ່ງນີ້:

1. ຈັບຈອງ, ຂຸດຄົ້ນ, ຕັດ, ບຸກລຸກທຳລາຍຕົ້ນຊາ, ປ່າຊາ ແລະ ທີ່ດິນປ່າຊາທຳມະຊາດ ໂດຍບໍ່ໄດ້ຮັບອະນຸຍາດ;
2. ຕັ້ງຖິ່ນຖານ, ຕູບ, ເຕົາຂົ້ວຊາ ຢູ່ເຂດປ່າຊາທຳມະຊາດ ໂດຍບໍ່ໄດ້ຮັບອະນຸຍາດ;
3. ສ້າງຕັ້ງໂຮງງານປຸງແຕ່ງໃບຊາ ໂດຍບໍ່ໄດ້ຮັບອະນຸຍາດ;
4. ດຳເນີນການສຳຫຼວດປ່າຊາ, ເກັບກູ້ໃບຊາ, ຊື້-ຂາຍ, ເຄື່ອນຍ້າຍ ຫຼື ສົ່ງອອກໃບຊາ, ຜະລິດຕະພັນໃບຊາ ແລະ ຕົ້ນຊາ ໂດຍບໍ່ໄດ້ຮັບອະນຸຍາດ;
5. ປອມແປງເອກະສານ ເຊັ່ນ: ລາຍເຊັນ, ຕາປະທັບ ແລະ ອື່ນໆ;
6. ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່ ແລະ ແອບອ້າງຜູ້ອື່ນ ເພື່ອຜົນປະໂຫຍດສ່ວນຕົວ;
7. ຍ້າຍ, ປ່ຽນແປງ ຫຼື ທຳລາຍ ເຄື່ອງໝາຍເຂດແດນປ່າຊາທຳມະຊາດ;
8. ໃຫ້ ຫຼື ຮັບສິນບົນ ຊຶ່ງສ້າງຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ສິດຜົນປະໂຫຍດຂອງປະຊາຊົນ;
9. ເຊົ່າ ຫຼື ສຳປະທານ ເພື່ອດຳເນີນກິດຈະການເກັບກູ້ໃບຊາທຳມະຊາດ ໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
10. ຫັນປ່ຽນປ່າຊາ ແລະ ທີ່ດິນປ່າຊາທຳມະຊາດ ໂດຍບໍ່ໄດ້ຮັບອະນຸຍາດ;
11. ຂັດຂວາງ, ກີດໜ່ວງ, ທ່ວງດຶງ ກ່ຽວກັບການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່;
12. ໃຊ້ພຶດຕິກຳອື່ນໆ ຊຶ່ງຂັດກັບຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 19 ຂໍ້ຫ້າມ ສຳລັບພະນັກງານ ແລະ ເຈົ້າໜ້າທີ່**

ຫ້າມພະນັກງານ ແລະ ເຈົ້າໜ້າທີ່ ປະຕິບັດດັ່ງນີ້:

1. ສວຍໃຊ້ໜ້າທີ່ຕຳແໜ່ງເກີນຂອບເຂດ, ຮັບສິນບົນ ເພື່ອຜົນປະໂຫຍດສ່ວນຕົວ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ຜົນປະໂຫຍດຂອງປະຊາຊົນ;
2. ປະລະໜ້າທີ່ຄວາມຮັບຜິດຊອບ ຕໍ່ການຄຸ້ມຄອງ, ບູລະນະ, ນຳໃຊ້ປ່າຊາ ແລະ ທີ່ດິນປ່າຊາທຳມະຊາດທີ່ການຈັດຕັ້ງມອບໝາຍໃຫ້;
3. ປອມແປງເອກະສານ ເຊັ່ນ: ລາຍເຊັນ, ຕາປະທັບ ແລະ ອື່ນໆ;
4. ດຳເນີນ ຫຼື ເຂົ້າຮ່ວມການດຳເນີນທຸລະກິດ ກ່ຽວກັບການເກັບກູ້, ຊື້-ຂາຍ, ເຄື່ອນຍ້າຍ ແລະ ສົ່ງອອກຊິ້ນສ່ວນ ຫຼື ຜະລິດຕະພັນໃບຊາທຳມະຊາດ;
5. ພຶດຕິກຳອື່ນໆ ຊຶ່ງຂັດກັບຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ VII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 20 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍຕາມລະບຽບການ.

**ມາດຕາ 21 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ປະຕິບັດວິໄນ, ປັບໃໝ ຫຼື ລົງໂທດ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 22 ມາດຕະການສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ເຊິ່ງກໍ່ຄວາມເສຍຫາຍທີ່ເບົາບາງມີມູນຄ່າຕໍ່າກວ່າ 500.000 ກີບ ແຕ່ຫາກມີຄວາມຈິງໃຈຮັບສາລະພາບຕໍ່ການກະທຳຜິດຂອງຕົນ ແລະ ສົ່ງຊັບສິນ ຫຼື ຂອງກາງ ທີ່ໄດ້ມານັ້ນຄືນຄົບຖ້ວນ ກໍ່ຈະຖືກຕັກເຕືອນ ແລະ ສຶກສາອົບຮົມ.

**ມາດຕາ 23 ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ເຊັ່ນ: ຕັດ, ຖາງ, ຈູດ ຫຼື ຂຸດຄົ້ນເອົາເບ້ຍຊາ ໃນປ່າຊາທຳມະຊາດ ຈະຖືກຍຶດຂອງກາງ ແລະ ປັບໃໝໜຶ່ງເທົ່າຂອງມູນຄ່າຄວາມເສຍຫາຍ ດັ່ງນີ້:

1. ຂະໜາດໜ້າຕ້າງ 1 ຊັງຕີແມັດລົງມາ ຈະຖືກຍຶດຂອງກາງ ແລະ ປັບໃໝ 50.000 ກີບ/ເບ້ຍ;
2. ຂະໜາດໜ້າຕ້າງ 1,1-5 ຊັງຕີແມັດ ຈະຖືກຍຶດຂອງກາງ ແລະ ປັບໃໝ 200.000 ກີບ/ຕົ້ນ;
3. ຂະໜາດໜ້າຕ້າງ 6-10 ຊັງຕີແມັດ ໃນປ່າຊາທຳມະຊາດ ຈະຖືກຍຶດຂອງກາງ ແລະ ປັບໃໝ 300.000 ກີບ/ຕົ້ນ;
4. ຂະໜາດໜ້າຕ້າງ 11-15 ຊັງຕີແມັດ ຈະຖືກຍຶດຂອງກາງ ແລະ ປັບໃໝ 500.000 ກີບ/ຕົ້ນ;
5. ຂະໜາດໜ້າຕ້າງ 16-20 ຊັງຕີແມັດ ຈະຖືກຍຶດຂອງກາງ ແລະ ປັບໃໝ 1.000.000 ກີບ/ຕົ້ນ;
6. ຂະໜາດໜ້າຕ້າງ 21-29 ຊັງຕີແມັດ ຈະຖືກຍຶດຂອງກາງ ແລະ ປັບໃໝ 2,000,000 ກີບ/ຕົ້ນ;
7. ຂະໜາດໜ້າຕ້າງ 30-39 ຊັງຕີແມັດ ຈະຖືກຍຶດຂອງກາງ ແລະ ປັບໃໝ 3,000,000 ກີບ/ຕົ້ນ;
8. ຂະໜາດໜ້າຕ້າງ 40 ຊັງຕີແມັດ ຂຶ້ນໄປ ຈະຖືກຍຶດຂອງກາງ ແລະ ປັບໃໝ 5,000,000 ກີບ/ຕົ້ນ;
9. ເກັບກູ້, ຊື້-ຂາຍ, ເຄື່ອນຍ້າຍ ແລະ ສົ່ງອອກຕົ້ນຊາ, ໃບຊາ ຫຼື ຜະລິດຕະພັນໃບຊາ ລວມທັງຊິ້ນສ່ວນອື່ນຂອງຕົ້ນຊາໂດຍບໍ່ໄດ້ຮັບອະນຸຍາດ ແມ່ນຈະຖືກຍຶດຂອງກາງ ພ້ອມທັງປັບໃໝຕາມລາຄາໃນທ້ອງຕະຫຼາດ.

ກໍລະນີມີການລະເມີດເປັນຄັ້ງທີສອງ ຫຼື ເປັນອາຈິນ ກໍ່ຈະຖືກຍຶດຂອງກາງ ແລະ ປັບໃໝສອງເທົ່າຂອງ ມູນຄ່າຄວາມເສຍຫາຍ ຕາມທີ່ກໍານົດໄວ້ຂ້າງເທິງ.

ນອກຈາກການປັບໃໝແລ້ວ ພາຫະນະ, ອຸປະກອນ ທີ່ພົວພັນກັບການກະທໍາຜິດ ອາດຈະຖືກຮິບເປັນຂອງລັດ, ໂຈະກິດຈະການ, ຖອນໃບອະນຸຍາດ, ສິດ ໃນການເກັບກູ້, ຊື້-ຂາຍ, ນໍາໃຊ້ປ່າຊາ ແລະ ທີ່ດິນປ່າຊາທໍາມະຊາດ ຫຼື ປະຕິບັດວິໄນຕາມລະບຽບການ.

## ໝວດທີ VIII

## ບົດບັນຍັດສຸດທ້າຍ

**ມາດຕາ 24 ການຈັດຕັ້ງປະຕິບັດ**

ໃຫ້ພະແນກກະສິກໍາ ແລະ ປ່າໄມ້ແຂວງ, ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ອົງການຈັດຕັ້ງທຸກພາກສ່ວນທົ່ວແຂວງ ຕະຫຼອດຮອດປະຊາຊົນບັນດາເຜົ່າ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 25 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ 15 ວັນ.

ເຈົ້າແຂວງ - ແຂວງອຸດົມໄຊ

ປອ ຄໍາພັນ ເຜີຍຍະວົງ